GCI

# ບົດທີ 6

# ການວາງແຜນງານດ້ານພັນທະກິດ

## ບົດນຳ:

ວັດຖຸປະສົງຂອງການສຶກສາ:

- ເພື່ອທີ່ຈະເຂົ້າໃຈຄວາມສຳຄັນຂອງການວາງແຜນ
- ເພື່ອທີ່ຈະເຂົ້າໃຈພື້ນຖານແຫ່ງພະຄຳພີກ່ຽວກັບການວາງແຜນ
- ເພື່ອທີ່ຈະສຶກສາແງ່ມຸມຕ່າງໆ ທີ່ນຳມາໃຊ້ປະໂຫຍດໄດ້
- ເພື່ອທີ່ຈະຮຽນຮູ້ທີ່ຈະຕັ້ງຈຸດໝາຍໃນການທຳງານ

## ໂຄງຮ່າງຂອງບົດຮຽນ

I. ບົດນຳ
   ກ. ຄວາມໝາຍ ແລະຄຳນິຍາມຂອງການວາງແຜນເພື່ອທີ່ຈະຮູ້ໃນສິ່ງທີ່ຈະເຮັດຕໍ່ໄປ ແລະຈະເຮັດຢ່າງໃດ
   ຂ. ເຮົາຕ້ອງສາມາດວາງແຜນໃຈທຸກແງ່ມຸມຂອງຊີວິດ
   ຄ. ໃນປະຖົມມະການພະເຈົ້າຊົງສ້າງ
   ງ. ຊາຕານຮູ້ວ່າພະເຈົ້າມີແຜນງານ ເພາະສະນັ້ນຊາຕານຈຶ່ງວາງແຜນການຂຶ້ນມາ

II. ຮາກຖານກ່ຽວກັບພະຄຳພີ ແລະທາງຫລັກສາດສະໜາສາດແຫ່ງການວາງແຜນ
   ກ. ພະເຈົ້າຊົງໃຊ້ມະນຸດ
   ຂ. ການວາງແຜນນັ້ນໝາຍເຖິງການມີສ່ວນຮ່ວມກັນລະຫວ່າງພະເຈົ້າກັບມະນຸດ

III. ການວາງແຜນຄືຫຍັງ?
   ກ. ການວາງແຜນເປັນສະພານທີ່ຈະເຊື່ອມໄປສູ່ອານາຄົດ ເປັນຈຸດເຊື່ອມຕໍ່ລະຫວ່າງປະຈຸບັນກັບອານາຄົດທີ່ກຳລັງຈະມາເຖິງ
   ຂ. ການວາງແຜນເປັນເລື່ອງຂອງຄວາມເຊື່ອ ເລື່ອງຂອງຄວາມເຊື່ອທີ່ຕັ້ງໄວ້ລ່ວງໜ້າ ການວາງແຜນເປັນການຮຽນອານາຄົດຂຶ້ນມາ
   ຄ. ການວາງແຜນເປັນການແຍກແຍະລະຫວ່າງສິ່ງທີ່ພະເຈົ້າໄດ້ເອີ້ນເຮົາໃຫ້ເຮັດ ແລະການຕັດສິນໃຈທີ່ຈະໄປໃນທາງທີ່ດີທີ່ສຸດຊຶ່ງເປັນການສະໜອງຕໍ່ການຊົງເອີ້ນຂອງພະເຈົ້າ

IV. ເປັນຫຍັງຄຣິສຕຽນຈຶ່ງຕ້ອງວາງແຜນ ?

V. ເຫດຜົນ 5 ປະການໃນການວາງແຜນ
   ກ. ເພາະການວາງແຜນນັ້ນເຮັດໃຫ້ເຮົາມີຈຸດໝາຍ ແລະຕົວນຳທາງທີ່ຈະຮູ້ວ່າເຮົາຈະໄປທາງໃດ ແລະເຮົາຈະໄປເຖິງເມື່ອໃດ
   ຂ. ເພາະພະເຢຊູນັ້ນຊົງບອກໃຫ້ເຮົາວາງແຜນ
   ຄ. ເພາະວ່າຕົວເລືອກ ແລະການຕັດສິນໃຈ ແລະການກະທຳຂອງເຮົາທຸກຢ່າງໃນມື້ນີ້ຈະມີຜົນກະທົບຕໍ່ສິ່ງທີ່ຈະເກີດຂຶ້ນໃນມື້ອື່ນ
   ງ. ເພາະວ່າພະເຈົ້ານັ້ນຊົງຕອບການອະທິຖານຂອງເຮົາເມື່ອເຮົາຮັບໃຊ້ພະອົງດ້ວຍຄວາມສາມາດທີ່ເຮົາມີຢູ່ທັງໝົດ ເຮົາອາດຈະບໍ່ເປັນຄົນທີ່ດີທີ່ສຸດ ແຕ່ເຮົາອາດຈະເຮັດໃຫ້ດີທີ່ສຸດເທົ່າທີ່ເຮົາຈະເຮັດໄດ້
   ຈ. ເພາະວ່າພະເຈົ້າມີແຜນການເພື່ອທ່ານ

GCI

VI. ການຕອບສະໜອງອານາຄົດທີ່ຈະມາເຖິງ
- ກ. ລະເລີຍອານາຄົດໄປເສັຽ
- ຂ. ມີການວາງແຜນເລັກນ້ອຍ
- ຄ. ມີການວາງແຜນດ້ວຍຄວາມເຊື່ອວ່າສິ່ງທີ່ເຮົາເຮັດໃນວັນນີ້ຈະມີຜົນເຖິງມື້ໜ້າ

VII. ຈະວາງແຜນຢ່າງໃດ ມີຫ້າຂັ້ນຕອນໃນການວາງແຜນ
- ກ. ອະທິຖານເພື່ອນິມິດ : ນິມິດຄືອັນໃດ?
- ຂ. ເປົ້າໝາຍ : ເຮົາຕ້ອງການເຮັດອັນໃດໃຫ້ສຳເລັດ?
- ຄ. ກົນລະຍຸດ : ເຮົາຈະໄປເຖິງເປົ້າໝາຍນັ້ນໄດ້ຢ່າງໃດ?
- ງ. ເປົ້າໝາຍ : ກົນລະຍຸດທີ່ເຮົາໃຊ້ຈະສຳເລັດເມື່ອໃດ?
- ຈ. ປັດໃຈທີ່ນຳມາໃຊ້ : ກົນລະຍຸດທີ່ເຮົາໃຊ້ຈະສຳເລັດເມື່ອໃດ?
- ສ. ຈຸດທີ່ຈະຕ້ອງຮູ້ໃນການວາງແຜນ

GCI

# I. ບົດນຳ

ກ. ຄວາມໝາຍຫລືຄຳນິຍາມຂອງການວາງແຜນ

ເພື່ອທີ່ຈະຮູ້ວ່າຈະເຮັດອັນໃດ ແລະເຮັດໄດ້ຢ່າງໃດ?

ຂ. ເຮົາວາງແຜນທຸກແງ່ມຸມຂອງຊີວິດ

ເຊັ່ນດຽວກັນ ໃນການປະກາດ ແລະໃນການສ້າງຄຣິສຕະຈັກ

ເຮົາ ຈຳ ເປັນທີ່ຈະຕ້ອງວາງແຜນວ່າ ເຮົາຈະເຮັດອັນໃດ ຈະເຮັດຢ່າງໃດ

ເຮົາມີເມັດພືດ ( ຊຶ່ງເປັນພະວັດຈະນະຂອງພະເຈົ້າ)

ເຮົາຈະເຮັດຫຍັງແດ່? ແລະເຮັດຢ່າງໃດ

ເຮົາຈຳເປັນຕ້ອງຄົ້ນຄວ້າ ແລະຄົ້ນຫາສະຖານທີ່ທີ່ເຮົາຈະຫວ່ານ ໃນຄຳອູປະມາກ່ຽວກັບການຫວ່ານເມັດພືດ - ມັດທາຍ 13:3-8

ຄ. "ໃນປະຖົມມະການ ພະເຈົ້າຊົງເນລະມິດສ້າງ.."

ປະຖົມມະການ 1:1

ເຮົາເຫັນວ່າພະເຈົ້າຊົງມີແຜນການສຳລັບການເລີ້ມຕົ້ນການສ້າງໂລກນີ້ຂຶ້ນມາ ພະອົງຊົງຮູ້ວ່າພະອົງຕ້ອງການເຮັດ **ອັນໃດ** ແລະພະອົງຈະເຮັດສິ່ງນັ້ນໄດ້**ຢ່າງໃດ**

ວັນທີ່ 1 ພະອົງຊົງສ້າງຄວາມສະຫວ່າງ ແລະຄວາມມືດ - ຕອນເຊົ້າ ແລະຕອນຄ່ຳ
ວັນທີ່ 2 ພະອົງຊົງສ້າງຟ້າສະຫວັນ ແລະແຜ່ນດິນໂລກ - ຊົງແຍກນ້ຳອອກຈາກແຜ່ນດິນ
ວັນທີ່ 3 ພະອົງຊົງສ້າງທະເລ ແລະພື້ນດິນລວມທັງພືດພັນຕ່າງໆ
ວັນທີ່ 4 ພະອົງເຮັດໃຫ້ເກີດລະດູການ ປີ ແລະວັນ ໃຫ້ເກີດດວງອາທິດ ດວງຈັນ ແລະດວງດາວ
ວັນທີ່ 5 ພະອົງສ້າງໝູ່ປາ ແລະນົກທັງຫລາຍ
ວັນທີ່ 6 ພະອົງຊົງສ້າງສັດຕ່າງໆ ແລະມະນຸດເພື່ອທີ່ຈະຄອບຄອງສັດເຫລົ່ານັ້ນ
ວັນທີ່ 7 ພະອົງຊົງຢຸດພັກ

1. ແຜນງານຂອງພະອົງ:: ເພື່ອທີ່ຈະເພີ່ມພູນ ແລະເຮັດໃຫ້ໂລກເຕັມໄປດ້ວຍສິ່ງທີ່ພະອົງຊົງສ້າງ ແລະສິ່ງທີ່ພະອົງຊົງສ້າງກໍຄອບຄອງໂລກ

2. ພະອົງໄດ້ຊົງປະທານໃຫ້ພຽງພໍ: ຄືປະທານອາຫານໃຫ້

3. ພະອົງຊົງມີແຜນການສຳລັບຄວາມພົ້ນຕັ້ງແຕ່ການເລີ້ມສ້າງໂລກຄັ້ງທຳອິດ: ອາດາມ ແລະເອວາ; ອາເບລ ແລະເຄື່ອງຖວາຍສັດບູຊາ; ເຕັ້ນພັບພາ; ພະເຢຊູຜູ້ຊຶ່ງເປັນພະເມສານ້ອຍຂອງພະເຈົ້າ

GCI

ງ. ຊາຕານຮູ້ວ່າພະເຈົ້າມີແຜນການ ແລະຊາຕານເອງກໍໄດ້ວາງແຜນການໄວ້ນຳ

ໂຢຮັນ 10:10

## II. ພື້ນຖານກ່ຽວກັບພະຄຳພີ ແລະແນວທາງຫລັກສາດສະໜາສາດແຫ່ງການວາງແຜນ

*ກ. ພະເຈົ້ານັ້ນຊົງໃຊ້ມະນຸດ*

1. ໂມເຊ: ເພື່ອທີ່ຈະປົດປ່ອຍອິສະຣາເອນ - ອພຍ 3:7-10

2. ໂປໂລ: ເພື່ອທີ່ຈະນຳພະກິດຕິຄຸນໄປສູ່ຄົນຕ່າງຊາດ - ກິດຈະການ 9:15

*ຂ. ການວາງແຜນນັ້ນເປັນການຮ່ວມກັນລະຫວ່າງພະເຈົ້າ ແລະມະນຸດ*

1. ປະຖົມມະການ 6:8 – ໂນອາໄດ້ຮັບເປັນຜູ້ທີ່ພະເຈົ້ານັ້ນຊົງໂປດປານໃນສາຍຕາຂອງພະອົງ

   ກ) 6:9 – ໂນອາເດີນຕາມພະເຈົ້າ

   ຂ) 6:13-16 – ພະເຈົ້າຊົງໃຫ້ແຜນການແກ່ໂນອາວ່າຈະເຮັດອັນໃດ ແລະຈະເຮັດສຳເລັດໄດ້ຢ່າງໃດ?

   ຄ) 6:18 – ພະເຈົ້າຊົງເຮັດພັນທະສັນຍາກັບໂນອາ

   ງ) 6:22 – ໂນອາໄດ້ເຮັດແຜນການຂອງພະເຈົ້າໃຫ້ລຸລ່ວງ
   ເຮັດໃຫ້ທຸກສິ່ງທີ່ພະເຈົ້າໄດ້ຊົງສັ່ງໃຫ້ເຂົາເຮັດ

2. ອົບພະຍົບ 3:2 - ພະເຈົ້າໄດ້ຊົງເອີ້ນໂມເຊ

   ກ) ຂໍ້ 3 - ໂມເຊໄດ້ຕອບສະໜອງ ແລະຫັນກັບມາຫາພະອົງ

   ຂ) ຂໍ້ 4 - ເມື່ອພະເຈົ້າເຫັນໂມເຊຕອບສະໜອງຕໍ່ການຊົງເອີ້ນ ພະອົງຊົງເອີ້ນເຂົາ
   - ແລະພະອົງຊົງລໍທີ່ຈະຟັງ ການຕອບສະໜອງຂອງເຂົາ

   ຄ) ຂໍ້ 7 - ພະເຈົ້າຊົງແບ່ງປັນສິ່ງທີ່ພະອົງຈະເຮັດຕໍ່ໂມເຊ ພະອົງຕັດວ່າ "ເຮົາໄດ້ເຫັນ" ແລະ "
   ເຮົາໄດ້ຍິນ"

   ງ) ຂໍ້ 8 - "ເຮົາໄດ້ມາເພື່ອທີ່ຈະປົດປ່ອຍເຂົາທັງຫລາຍ"

   ຈ) ຂໍ້10 – ພະອົງແບ່ງປັນກັບໂມເຊ ແລະຊົງສັ່ງວ່າໄປເຖີດ ເຮົາຈະໃຊ້ເຈົ້າໄປ ພະເຈົ້າຊົງໃຊ້ມະນຸດ!

3. ໂມເຊມີຂໍ້ແກ້ຕົວມາກມາຍ:

ກ) 11 – "ຂ້າພະເຈົ້າເປັນໃຜ?" – ເປັນຄວາມຮູ້ສຶກທີ່ວ່າຕົວເອງບໍ່ສຳຄັນ

ຂ) 13 – "ຂ້າພະເຈົ້າຈະກ່າວວ່າຢ່າງໃດ? " – ເປັນຄວາມຮູ້ສຶກວ່າເປັນຄົນບໍ່ມີຄວາມຮູ້

ຄ) 4-1- "ແລ້ວຖ້າພວກເຂົາບໍ່ເຊື່ອຂ້າພະເຈົ້າລະ"
– ເປັນຄວາມຮູ້ສຶກຢ້ານຕໍ່ການລັງກຽດ ແລະການຕໍ່ຕ້ານ

ງ) 4:11 – "ຂ້າພະເຈົ້າເວົ້າບໍ່ເກ່ງ" ເປັນຄວາມຮູ້ສຶກວ່າມີຄວາມສາມາດບໍ່ພຽງພໍ

ຈ) 4:13 – "ຂໍສົ່ງໃຜຄົນອື່ນໄປເຖີດ"

ສ) 4:2 – ພະເຈົ້າຕັດວ່າ "ເຈົ້າມີອັນໃດໃນມືຂອງເຈົ້າ? " ພະເຈົ້າມັກຈະໃຫ້ເຮົານຳສິ່ງທີ່ມີຢູ່ກັບຕົວໄປ ພະອົງຈະຊົງໃຊ້ສິ່ງເຫລົ່ານັ້ນໄດ້

ຊ) 3:12 – "ເຮົາຈະຢູ່ກັບເຈົ້າຢ່າງແນ່ນອນ"
ພະເຈົ້າຊົງໃຫ້ເຫັນການທີ່ມະນຸດກັບພະເຈົ້າເປັນຫຸ້ນສ່ວນກັນໄດ້

4. ກິດຈະການ 1:8

**ເຈົ້າ**ທັງຫລາຍຈະໄດ້ຮັບລິດອຳນາດ **ເຈົ້າ**ທັງຫລາຍຈະເປັນພະຍານສຳຫລັບເຮົາ

ພວກເຂົາທັງຫລາຍນັ້ນຈະເຮັດກິດຈະການມາກມາຍຫລາຍຢ່າງທີ່ຈະຂະຫຍາຍພະວັດຈະນະຂອງພະເຈົ້າ ແລະພະກິດ ຕິຄຸນຂອງພະອົງ ພະອົງຈະຊົງປະທານລິດອຳນາດແກ່ເຈົ້າທັງຫລາຍ ແລະພວກເຂົາຈະຕ້ອງ ໃຊ້ລິດອຳນາດ ນັ້ນຂະຫຍາຍຂ່າວປະເສີດຂອງພະເຈົ້າ

5. ເອເຟໂຊ 1:4 – ພະເຈົ້າຊົງເລືອກທ່ານກ່ອນທີ່ພະອົງຈະຊົງສ້າງໂລກເສັຽອີກ

6. ເອເຟໂຊ 2:10 – ເຮົາທັງຫລາຍເປັນຜູ້ຮັບໃຊ້ຂອງພະເຈົ້າ

7. 1ໂກຣິນໂທ 3:5-7 :
ໂປໂລເປັນຜູ້ຫວ່ານເມັດພືດ ອະໂປໂລເປັນຜູ້ຫົດນ້ຳ ແຕ່ພະເຈົ້າຊົງເຮັດໃຫ້ເຕີບໃຫຍ່

ຂະນະທີ່ເຮົາທຳການປູກເຂົ້າ ແລະຫົດນ້ຳ ພະເຈົ້າຈະຊົງເຮັດໃຫ້ເຕີບໃຫຍ່ຂື້ນ

ນີ້ເປັນຫລັກດຽວກັນກັບການປະກາດ ແລະການກໍ່ຕັ້ງຄຣິສຕະຈັກ

ພະເຈົ້າຊົງມີແຜນການ ແລະພະອົງຊົງທຳງານໃຫ້ສຳເລັດຜ່ານທາງທ່ານ

ກ) ພະເຈົ້າຊົງໃຊ້ມະນຸດ

ຂ) ພະເຈົ້າຊົງເປັນຫຸ້ນສ່ວນກັບມະນຸດ

GCI

## 3. ການວາງແຜນຄືອັນໃດ?

ກ. *ການວາງແຜນຄືສະພານທີ່ຈະໄປສູ່ອານາຄົດ ເປັນຈຸດເຊື່ອມຕໍ່ຈາກປະຈຸບັນໄປສູ່ອະນາຄົດທີ່ຍັງບໍ່ມາເຖິງ*

ສິ່ງທີ່ເຂົາມີຢູ່ → **ການວາງແຜນ** → ສິ່ງທີ່ເຮົາຢາກໃຫ້ເຂົາມີ

1. ເນເຫມີ 1:1–4 – ເນເຫມີໄດ້ຍິນວ່າກຳແພງເຢລູຊາເລັມຖືກທຳລາຍລົງ ແລະປະຕູເມືອງກໍຖືກເຜົາລຸກເປັນໄຟ – **ນັ້ນເປັນສິ່ງທີ່ເປັນຢູ່ໃນປະຈຸບັນ**

2. ເນເຫມີ 2:5 – ພະເຈົ້າສົ່ງເນເຫມີໄປເຢລູຊາເລັມເພື່ອທີ່ເຂົານັ້ນຈະສ້າງກຳແພງ ແລະປະຕູເມືອງຂຶ້ນມາໃຫມ່ – **ສິ່ງທີ່ເຮົາຢາກໃຫ້ເຂົາມີ**

ຂ. *ການວາງແຜນນັ້ນເປັນການບົ່ງຊີ້ເຖິງຄວາມເຊື່ອ ເປັນຄວາມເຊື່ອທີ່ເບິ່ງໄປລ່ວງໜ້າ*

ເຮັບເຣີ 11:1 ".. ເປັນຄວາມຮູ້ສຶກໝັ້ນໃຈວ່າ ສິ່ງທີ່ຍັງບໍ່ໄດ້ເຫັນນັ້ນມີແທ້"

ຢ່າ**ຈຳກັດ**ຕົວເອງ ແລະການວາງແຜນຂອງທ່ານກັບສິ່ງທີ່ມະນຸດສາມາດເຮັດໄດ້
ແຕ່ຈົ່ງວາງແຜນໃນສິ່ງທີ່ພະເຈົ້າປາດຖະໜາຈະໃຫ້ເກີດຂຶ້ນ ອາດຈະບໍ່ແມ່ນສິ່ງທີ່ທ່ານກຳລັງເຮັດຢູ່ໃນຂະນະນີ້

ຍົກຕົວຢ່າງ ອັບລາຮາມ – ປະຖົມມະການ 13:14–15:
"ເຈົ້າຈົ່ງເງີຍໜ້າເບິ່ງສະຖານທີ່ ຕັ້ງແຕ່ເຈົ້າຢູ່ນີ້ໄປທາງທິດເໜືອ ທິດໃຕ້ ທິດຕາເວັນອອກ ທິດຕາເວັນຕົກ ດິນແດນທັງໝົດທີ່ເຈົ້າເຫັນນີ້ເຮົາຈະຍົກໃຫ້ເຈົ້າ ແລະພົງພັນຂອງເຈົ້າຕໍ່ໄປເປັນນິດ

1. ທ່ານເຫັນອັນໃດ?

2. ສິ່ງທີ່ທ່ານເຫັນຄືສິ່ງທີ່ທ່ານຈະໄດ້ຮັບ

3. ສິ່ງທີ່ທ່ານບໍ່ເຫັນຄືສິ່ງທີ່ທ່ານຈະບໍ່ໄດ້ຮັບ

    ກ) ໂນອາ ແລະເຮືອທີ່ເຂົາຕໍ່ຂຶ້ນ – ຈະຕໍ່ເຮືອຂຶ້ນເພື່ອອັນໃດໃນເມື່ອບໍ່ມີນ້ຳເລີຍ?

4. ທ່ານເຫັນອັນໃດ? ຢ່າຈຳກັດຕົວເອງໃນສິ່ງທີ່ເລັກນ້ອຍ

    ກ. ເອຊາຢາ 54:2–3
    *2 ຈົ່ງເຮັດໃຫ້ເຕັນທີ່ເຈົ້າອາໄສຢູ່ກວ້າງອອກ*
    *ຈົ່ງຕໍ່ເຊືອກເຕັນໃຫ້ຍາວອອກ ແລະຝັງຫລັກມັນໃຫ້ແໜ້ນ.*
    *3 ເຈົ້າຈະຂະຫຍາຍເຂດແດນອອກໄປທຸກດ້ານ*
    *ປະຊາຊົນຂອງເຈົ້າຈະກັບຄືນປະເທດ*
    *ຈະໄດ້ຊົນຊາດທັງຫລາຍມາຢູ່ພາຍໃຕ້ການປົກຄອງ*
    *ເມືອງຮ້າງທັງຫລາຍຈະມີຄົນເຕັມຢູ່.*

GCI

- **ເຮັດໃຫ້ໃຫຍ່ຂຶ້ນ - ຍືດອອກໄປໃຫ້ຫລາຍຂຶ້ນ**
- **ຢ່າເກັບເອົາໄວ້**
- **ເຮັດໃຫ້ຍາວຂຶ້ນ**
- **ຂະຫຍາຍໃຫ້ກວ້າງຂຶ້ນ**
- **ເຂົ້າໄປຢູ່ບ່ອນນັ້ນ**

ຄ. ການວາງແຜນ ຄ ການຂຽນອານາຄົດຂຶ້ນມາ

ເຮົາສາມາດທໍານວາຍອະນາຄົດທີ່ຈະເກີດຂຶ້ນດ້ວຍຄວາມໝັ້ນໃຈວ່າ ຈະແຕກຕ່າງຈາກອາດີດທີ່ຜ່ານມາ ແລະປະຈຸບັນນີ້ ຄວາມຄິດທີ່ເບິ່ງໄປຂ້າງໜ້າຈະສົ່ງຜົນກະທົບຕໍ່ສິ່ງທີ່ທ່ານເຮັດໃນວັນນີ້ໃນງານພັນທະກິດຂອງທ່ານ

1. ຄວາມຄິດຂອງພະເຢຊູສໍາລັບອານາຄົດມີອັນໃດແດ່?

   ກ) ມັດທາຍ 28:18-20 : ພະມະຫາບັນຊາ<br>ໃຫ້ເກີດສາວົກທົ່ວທັງໂລກ

   ຂ) ໂຣມ 8:29 : ເຂົ່າທຸກເຂົ່າຈະຄຸກລົງ

   ຄ) ພະນິມິດ 7:9 : ມະນຸດທຸກຊາດທຸກພາສາຈະຢືນຢູ່ຕໍ່ໜ້າ ພະບັນລັງຂອງພະອົງ

2. ເຮົາຈະເຮັດອັນໃດ ແລະຕັດສິນໃຈທີ່ຈະເຮັດໃນວັນນີ້ ຈະເຮັດໃຫ້ເກີດອານາຄົດໃຫມ່ຂຶ້ນມາ

   ວິນລ່ຽມ ແຄລີ ປ່ຽນປະເທດອິນເດັຽ

   ຮັດສັນ ເທເລີ ປ່ຽນປະເທດຈີນ

   ອະໂດນີຣາມ ຈັດສັນ ປ່ຽນປະເທດພະມ້າ

   ທ່ານສາມາດປ່ຽນສິ່ງທີ່ມີຢູ່ໃນຊຸມຊົນຂອງທ່ານໄດ້

GCI

ງ. ການວາງແຜນຄືການແຍກແຍະໃນສິ່ງທີ່ພະເຈົ້າຕ້ອງການໃຫ້ເຮົາເຮັດ ແລະຕັດສິນໃຈໃນທາງທີ່ດີທີ່ສຸດເພື່ອທີ່ຈະຕອບສະໜອງໃນການຊົງເອີ້ນຂອງພະເຈົ້າ

ສຸພາສິດ 24:3-4 : ບ້ານນັ້ນກໍຖືກສ້າງຂຶ້ນໂດຍສະຕິປັນຍາ

*ດ້ວຍຄວາມເຂົ້າໃຈນັ້ນກໍສາມາດກໍສ້າງບ້ານໄດ້ ແລ້ວຜ່ານທາງຄວາມຮູ້ຫ້ອງຕ່າງໆ ກໍເຕັມໄປດ້ວຍຊັບສິນທີ່ມີຄ່າ ແລະສວຍງາມ*

ການວາງແຜນກ່ຽວຂ້ອງກັບ:

ກ) **ຄວາມຮູ້ –** ທີ່ຈະຮູ້ຄວາມຈິງ ແລະພື້ນຖານຄວາມຈິງທີ່ມີຢູ່

ຂ) **ຄວາມເຂົ້າໃຈ –** ທີ່ຈະສາມາດນໍາຄວາມຈິງທີ່ມີນັ້ນ ມາທໍາຄວາມເຂົ້າໃຈທີ່ລຶກຊຶ້ງໄດ້

ຄ) **ປັນຍາ –** ເພື່ອຈະເຮັດຄວາມຈິງທີ່ມີໄປປະຍຸກໃຊ້ໃຫ້ເປັນປະໂຫຍດ

## 4. ເປັນຫຍັງຄຣິສຕຽນຈຶ່ງຕ້ອງວາງແຜນ

"ບ່ອນໃດໆທີ່ບໍ່ມີການເຜີຍທໍາ ປະຊາຊົນກໍປະຖິ້ມຄວາມຢັບຢັ້ງຊັ່ງໃຈເສັຽ"
ສຸພາສິດ 29:18

ບາງຄັ້ງການວາງແຜນຂອງເຮົາອາດຈະຕ່າງຈາກການຊົງນໍາຂອງພະເຈົ້າ ເພາະສະນັ້ນເປັນສິ່ງທີ່ສໍາຄັນເປັນຢ່າງຍິ່ງວ່າການວາງແຜນນັ້ນຈະຕ້ອງມີການອະທິຖານດ້ວຍພະວິນຍານທີ່ຈະເຮັດໃຫ້ເກີດການວາງແຜນຂຶ້ນ

"ໃຈຂອງມະນຸດກະແຜນງານທາງຂອງເຂົາ ແຕ່ພະເຈົ້າຊົງນໍາຍ່າງເທົ້າຂອງເຂົາ"
ສຸພາສິດ 16:9

ບໍ່ວາງແຜນ ນັ້ນ ກໍເປັນການວາງແຜນຊະນິດນຶ່ງ

## 5. ເຫດຜົນ 5 ປະການໃນການງານແຜນ

ກ. ເພາະວ່າການວາງແຜນເຮັດໃຫ້ເກີດວັດຖຸປະສົງ ແລະເຮັດໃຫ້ເກີດການນໍາທາງທີ່ດີ ທີ່ຈະຮູ້ວ່າທ່ານຈະໄປທາງໃດ ແລະຈະໄປເຖິງບ່ອນໃດ

ໂປໂລ : " ສ່ວນຂ້າພະເຈົ້າແລ່ນເຂ່ງໂດຍມີເປົ້າໝາຍ ຂ້າພະເຈົ້າບໍ່ໄດ້ຕໍ່ສູ້ຢ່າງນັກມວຍທີ່ຊົກລົມ"
1 ໂກຣິນໂທ 9:26

ການວາງແຜນເຮັດໃຫ້ຊ່ວຍປະຫຍັດເວລາ

ສຸພາສິດ 13:16 : " ຄົນທີ່ຫຍັງຮູ້ເຮັດທຸກຢ່າງດ້ວຍຄວາມຮູ້.."

GCI

ຂ. ເພາະວ່າພະເຢຊູໄດ້ຊົງສອນເຮົາທີ່ຈະວາງແຜນ

ລູກາ 14:28-30

"ການທີ່ຈະສ້າງບ້ານນຶ່ງຫລັງຫລືອາຄານ - ຈະຕ້ອງນັ່ງລົງ ແລະຄິດຄຳນວນກ່ຽວກັບງົບປະມານ ການທີ່ຈະໄປລົບໃນສົງຄາມ - ຈະຕ້ອງນັ່ງລົງ ແລະພິຈາລະນາວ່າມີທະຫານພຽງພໍທີ່ຈະສູ້ລົບຫລືບໍ່

ຄ. ເພາະວ່າສິ່ງທີ່ເຮົາເລືອກ ການຕັດສິນໃຈ ແລະການກະທຳຂອງເຮົາໃນວັນນີ້ຈະກໍ່ໃຫ້ເກີດຜົນກະທົບໃນວັນໜ້າ

"ຜູ້ໃດຫວ່ານອັນໃດລົງໄປ ກໍຈະເກັບກ່ຽວສິ່ງນັ້ນ" ຄາລາເຕັຽ 6:7

ງ. ເພາະວ່າພະເຈົ້ານັ້ນໄດ້ໃຫ້ເຮົາມີສ່ວນທີ່ຈະຮັບໃຊ້ພະອົງໃນສິ່ງທີ່ເຮົາມີ ຄວາມສາມາດທີ່ເຮົາມີຢ່າງເຕັມທີ່ ເຮົາອາດຈະບໍ່ໄດ້ເຮັດໄດ້ດີທີ່ສຸດຖ້າປຽບທຽບກັບຄົນອື່ນແຕ່ເຮົາຈະເຮັດໃຫ້ດີທີ່ສຸດເທົ່າທີ່ເຮົາເຮັດໄດ້

ມີຄຳກ່າວວ່າ ຖ້າເກີດທ່ານບໍ່ມີເປົ້າໝາຍທີ່ຄິດຈະເຮັດສິ່ງໃດເລີຍ ທ່ານກໍບໍ່ສາມາດຈະເຮັດສິ່ງໃດໄດ້ສຳເລັດ

ຈ. ເພາະວ່າພະເຈົ້າຊົງມີແຜນງານສຳລັບທ່ານ

"ເພາະວ່າເຮົາຮູ້ແຜນງານທີ່ເຮົາມີໄວ້ສຳລັບເຈົ້າ ເປັນແຜນງານເພື່ອສະຫວັດດີພາບ ບໍ່ແມ່ນເພື່ອທຸກຂະພາບ ເພື່ອຈະໃຫ້ອານາຄົດ ແລະຄວາມຫວັງໃຈແກ່ເຈົ້າ ແລ້ວເຈົ້າຈະທູນຂໍຕໍ່ເຮົາ ແລະມາອະທິຖານຕໍ່ເຮົາ ແລະເຮົາຈະຟັງເຈົ້າ ເຈົ້າຈະສະແຫວງຫາເຮົາ ແລະພົບເຮົາເມື່ອເຈົ້າສະແຫວງຫາເຮົາດ້ວຍສິ້ນສຸດໃຈຂອງເຈົ້າ"
ເຢເລມີ 29:11-13

ພະອົງບໍ່ໄດ້ເປີດເຜີຍແຜນການທັງໝົດເທື່ອດຽວ ພວກເຮົາຈຳເປັນທີ່ຈະຕ້ອງກ້າວ ເດີນເທື່ອລະຂັ້ນກ່ອນທີ່ຈະກ້າວ ເດີນໄປເຮັດໃນສິ່ງທີ່ໃຫຍ່ ບາງຄັ້ງເຮົາຕ້ອງການທີ່ຈະໄປເຖິງບ່ອນນັ້ນໃນທັນທີ ຈົ່ງຈື່ໄວ້ວ່າ ຕົ້ນໄມ້ເກີດຂຶ້ນກ່ອນນົກທີ່ ຈະບິນມາເກາະ ແລະສັດຕ່າງໆ ກໍຖືກສ້າງກ່ອນມະນຸດ

## 6. ການວາງແຜນເປັນການຕອບສະໜອງຂອງເຮົາຕໍ່ອານາຄົດທີ່ຈະມາເຖິງ

ມະນຸດເຮົາມີການຕອບສະໜອງຕໍ່ຄວາມສາມາດຂອງເຮົາທີ່ຈະປ່ຽນອານາຄົດໃນຮູບແບບທີ່ແຕກຕ່າງກັນ

ກ. ລະເລີຍອານາຄົດທັງໝົດເລີຍ

"ຂ້າພະເຈົ້າບໍ່ມີຄວາມຮັບຜິດຊອບຕໍ່ອານາຄົດໃດໆທັງສິ້ນ" ຖ້າເຮົາມີທັດສະນະຄະຕິແບບນີ້ມັນກໍບໍ່ມີຄວາມຈຳເປັນ ອັນໃດທີ່ຈະຕື່ນຂຶ້ນມາໃນຕອນເຊົ້າ ຫລືກິນອາຫານ ເປັນຫຍັງຈະຕ້ອງອະທິຖານ? ເປັນຫຍັງຈະຕ້ອງແບ່ງປັນ ເປັນຫຍັງຈະຕ້ອງປະກາດ?

ຂ. ມີການວາງແຜນແດ່

"ຖ້າຂ້ອຍເປັນຄົນທີ່ວາງແຜນຂ້ອຍກໍຈະບໍ່ໄປໃສ ຂ້ອຍຈະແບ່ງປັນໃຫ້ກັບບາງຄົນທີ່ຂ້ອຍຮູ້ຈັກ ແລະຈະເບິ່ງວ່າຈະເກີດອັນໃດຂຶ້ນ"

GCI

ຄ. ວາງແຜນໃຫ້ດີ ວາງແຜນດ້ວຍຄວາມເຊື່ອ ສິ່ງທີ່ທ່ານເຮັດໃນວັນນີ້ຈະເກີດຂຶ້ນໃນມື້ໜ້າ

ພວກເຮົາອະທິຖານໃນການທີ່ປ່ຽນອະນາຄົດ

ພວກເຮົາປະກາດເພື່ອທີ່ຈະປ່ຽນອະນາຄົດ

ຈົ່ງຈື່ໄວ້ວ່າ ສິ່ງທີ່ຕັດ ສິນໃຈເຮັດໃນມື້ນີ້ ກໍ່ໃຫ້ເກີດມື້ອື່ນຂຶ້ນມາ

## 7. ຈະວາງແຜນຢ່າງໃດ – ຂັ້ນຕອນ 5 ຂັ້ນຕອນສຳລັບການວາງແຜນ

ຂັ້ນຕອນທີ່ 1 **ອະທິຖານ**ເພື່ອທີ່ຈະກໍ່ໃຫ້ເກີດນິມິດ – ນິມິດຄືອັນໃດ?
ນິມິດ ຄື ສິ່ງທີ່ຕັ້ງໃຈຄືກັບນັກແລ່ນທີ່ເບິ່ງເຫັນໄປເຖິງເສັ້ນໄຊ (ຟີລິບປອຍ 3:13–14)

ຂັ້ນຕອນທີ່ 2 **ເປົ້າໝາຍ:** ອັນໃດຄືສິ່ງທີ່ທ່ານປາດຖະໜາຈະເຮັດໃຫ້ສຳເລັດ

ຂັ້ນຕອນທີ່ 3 **ຍຸດທະວິທີ** : ທ່ານຈະໄປເຖິງເປົ້າໝາຍນັ້ນໄດ້ຢ່າງໃດ
ຂັ້ນຕອນນີ້ຄື ຂັ້ນຕອນທີ່ຈະນຳທ່ານຈາກສິ່ງທີ່ເປັນຢູ່ດຽວນີ້ໄປສູ່ບ່ອນທີ່ທ່ານຕ້ອງການຈະໄປ

ຂັ້ນຕອນທີ່ 4 **ຈຸດໝາຍ**: ທ່ານຈະນຳກົນລະຍຸດທີ່ທ່ານມີໃຫ້ສຳເລັດເມື່ອໃດ
ຈົ່ງມີການຕັ້ງເວລາໃນງານທີ່ທ່ານເຮັດຢູ່ ຈະເລີ້ມຕົ້ນເມື່ອໃດ ແລະຈະສິ້ນສຸດເມື່ອໃດ

ຂັ້ນຕອນທີ່ 5 **ປັດໃຈ:** ທ່ານຈະຕ້ອງໃຊ້ປັດໃຈເທົ່າໃດຈຶ່ງຈະເຮັດໃຫ້ນິມິດຂອງທ່ານປະສົບຜົນສຳເລັດ
ທ່ານອາດຈະຕ້ອງໃຊ້ຄົນ ໃຊ້ອຸປະກອນເວລາ ຂ່າວສານ ແລະປັດໃຈທາງດ້ານເງິນນຳ

### ກ. ອະທິຖານສຳລັບນິມິດໃນສິ່ງທີ່ພະເຈົ້າຕ້ອງການຢາກໃຫ້ທ່ານເຮັດ (ບໍ່ແມ່ນສິ່ງທີ່ທ່ານ ຄິດວ່າ ຈະເຮັດໄດ້)

1. ການອະທິຖານນັ້ນເປັນກຸນແຈ

*"ຈົ່ງມອບງານຂອງເຈົ້າໄວ້ກັບພະເຈົ້າ ແລະແຜນງານຂອງເຈົ້າຈະໄດ້ຮັບການສະຖາປານາ" ສຸພາສິດ 16:3*

ມີສິ່ງໃດເກີດຂຶ້ນໄດ້ ຈົນກະທັ້ງບາງຄົນມີນິມິດທີ່ຈະເຮັດສິ່ງນັ້ນ

2. ມີ 3 ສິ່ງທີ່ຈະໄດ້ຮັບນິມິດຈາກພະເຈົ້າ:

ກ) ພະເຈົ້າສຳແດງໃຫ້ເຮົາເຫັນວ່າ ສິ່ງໃດທີ່ພະອົງກຳລັງຈະເຮັດ

ຂ) ພະເຈົ້າສຳແດງໃຫ້ເຫັນວ່າ ພະອົງກຳລັງເຮັດສິ່ງນັ້ນຢ່າງໃດ

ຄ) ພະເຈົ້າສຳແດງໃຫ້ເຫັນວ່າ ພະອົງຈະເຮັດສິ່ງນັ້ນເມື່ອໃດ

| | | | |
|---|---|---|---|
| 1. | ໂນອາ: | ປະຖົມມະການ 6:13 | ອັນໃດ |
| | | 6: 14–17 | ຢ່າງໃດ |
| | | 7:1 | ເມື່ອໃດ |

GCI

2. ຮັບລາຮາມ: ປະຖົມມະການ 13:14–15 ອັນໃດ
16 ຢ່າງໃດ
17 ເມື່ອໃດ
ຂັ້ນຕອນທຳອິດ ຈົ່ງອອກໄປ – 12:1;13:1
ພະເຈົ້າກຳລັງກ່າວກັບທ່ານຢ່າງໃດແດ່?
ຢ່າພຽງແຕ່ຮຽນແບບໃນສິ່ງທີ່ຄົນອື່ນກຳລັງເຮັດ
ພະເຈົ້າອາດຈະມີແຜນງານພິເສດສຳລັບຕົວທ່ານ

3. ນິມິດຈາກພະເຈົ້າ

ຍົກຕົວຢ່າງ: ໂປໂລ – ກິດຈະການ 26:19 " ຂ້າພະອົງຈຶ່ງເຊື່ອຟັງນິມິດ"

ອັນໃດຄືນິມິດ

ກິຈະການ 9:15 " ຈະນຳນາມຂອງເຮົາໄປບ່ອນປະຊາຊາດ ກະສັດ ແລະພວກອິສະລາເອນ"

ຄາລາເຕັຽ 2:7 " ຂ້າພະເຈົ້າໄດ້ຮັບມອບໃຫ້ປະກາດຂ່າວປະເສີດແກ່ຄົນເຫລົ່ານັ້ນທີ່ຖືພິທີເຂົ້າສຸນັດ"

ໂປໂລນັ້ນໄດ້ເບິ່ງກົງໄປຂ້າງໜ້າຊື່ເສັ້ນໄຊສະເໝີ

4. ນິມິດຈະຕ້ອງໄດ້ຮັບການຂຽນລົງໄປ – ຮາບາກຸກ 2:2–3

ພວກເຮົາຕ້ອງສາມາດທີ່ຈະແບ່ງປັນນິມິດຂອງເຮົາໃຫ້ກັບຄົນອື່ນ ເພື່ອພວກເຂົານັ້ນຈະມີສ່ວນກັບເຮົາໃນການໄປສູ່ເປົ້າໝາຍໄດ້

ກ) ໃນການສະແຫວງຫາເປົ້າໝາຍ ຖາມຕົວເອງດ້ວຍຄຳຖາມສອງປະການນີ້

(1) ເຮົາມີເປົ້າໝາຍຫລືບໍ່ : ຫລືມີພາລະອັນໃດ ຫລືບໍ່

(2) ເຮົາໄດ້ເຫັນເຖິງຄວາມຕ້ອງການທີ່ຢູ່ຂ້າງນອກນັ້ນຫລືບໍ່

ຂ) ຕົວຢ່າງເນເຫມີ

(1) ເນເຫມີນັ້ນໄດ້ເຫັນເຖິງຄວາມຕ້ອງການ (1:1–4)
ກ່ອນໜ້ານັ້ນເນເຫມີບໍ່ມີພາລະໃຈເລື່ອງໃດເລີຍ ແຕ່ເມື່ອເຂົາໄດ້ຍິນເຂົາໄດ້ເຫັນເຖິງຄວາມຕ້ອງການບ່ອນນັ້ນ

(2) ເນເຫມີນັ້ນໄດ້ເຂົ້າໄປມີສ່ວນຮ່ວມ ເຂົາໄດ້ເລີ່ມຕົ້ນທີ່ຈະອະທິຖານ ຈະຄິດ ແລະວາງແຜນ
ເຂົາບໍ່ໄດ້ໜີຈາກໄປ ເຂົາຖາມວ່າພະເຈົ້າຕ້ອງການໃຫ້ຂ້າພະເຈົ້າເຮັດອັນໃດ"

GCI

(3) ເນເຫມີໄດ້ນຳເອົາພາລະໃຈທີ່ມີຢູ່ນັ້ນມອບໃຫ້ກັບພະເຈົ້າ (1:5-11)
ເຂົາອະທິຖານໄດ້ເວົ້າເຖິງຄວາມຕ້ອງການທີ່ມີຢູ່ໃນເຢລູຊາເລັມ ແລະໄດ້ເວົ້າກັບກະສັດ (ຂໍ້10)
ການອະທິຖານ ແລະການກະທຳຍ່ອມຕ້ອງໄປນຳກັນ
ຄວາມເຊື່ອທີ່ປັດສະຈາກການປະຕິບັດກໍໄຮ້ປະໂຫຍດ

(4) ເນເຫມີນັ້ນທຳຕົວເອງໃຫ້ເປັນຄົນທີ່ໃຊ້ໄດ້ 2:5
ເນເຫມີໄດ້ກ່າວວ່າ ສິ່ງຂ້າພະເຈົ້າໄປເຖິດໃນເມືອງນັ້ນ

(5) ເນເຫມີ ໄດ້ວາງແຜນ
ເນເຫມີນັ້ນໄດ້ໃຊ້ເວລາ 4 ເດືອນທີ່ຈະເລີ່ມຕົ້ນຄິດເຖິງສິ່ງທີ່ຕ້ອງການໃນຂັ້ນຕອນທຳອິດ
ຈົນກະທັ້ງເຂົາສາມາດທີ່ຈະວາງແຜນອອກໄປ ກະສັດໄດ້ຖາມເນເຫມີ (2:4)
ວ່າທ່ານຕ້ອງການອັນຫລື?

5. ອັນໃດທີ່ເຮັດທ້ານິມິດນັ້ນຖືກທຳລາຍໄປ

ກ) ເບິ່ງເຫັນແຕ່ບັນຫາໂດຍປັດສະຈາກນິມິດ ເນເຫມີ - ຄົນອື່ນອາດຈະຄິດວ່າເປັນເລື່ອງໄຮ້ສາລະ

ຂ) ເປັນການກະທຳທີ່ເປັນປະເພນີສືບມາ - ໂດຍບໍ່ຢາກປ່ຽນແປງ
ເຊັ່ນ ຄົນໃນສັງຄົມກ່າວວ່າ ເຄີຍເປັນແບບນັ້ນແລ້ວປ່ຽນໄປເຮັດຫຍັງ

ຄ) ຄວາມຢ້ານການຫລົ້ມເຫລວ - ລອງລຸກຂຶ້ນ ແລະພະຍາຍາມອີກຄັ້ງນຶ່ງ

ງ) ເບິ່ງເຫັນອຳນາດຂອງສັດຕູຫລາຍກວ່າອຳນາດຂອງພະເຈົ້າ
ເນເຫມີ: ມີການຕໍ່ຕ້ານຈາກສັດຕູມາກມາຍ

ຈ) ເບິ່ງເຫັນເຖິງຄຳເວົ້າທີ່ສົ່ງໄປໃນແງ່ລົບ ແທນທີ່ຈະມຸ້ງໄປຍັງຄວາມເຊື່ອ

ເນເຫມີ: ມີຫລາຍຄົນຕອນນັ້ນໝົດກຳລັງໃຈ ແລະທໍ້ຖອຍ
ຍົກຕົວຢ່າງ : ການສົ່ງຜູ້ສອດແນມໄປໃນການາອານ - ຈົດເຊັນບັນຊີ 13:28-33

ລອງມາເຮັດສິ່ງນີ້: ອະທິຖານສອງຄົນແລ້ວແບ່ງປັນນິມິດໃຫ້ກັບອີກຄົນນຶ່ງ
ຫລືລອງຂະຫຍາຍນິມິດຈອງຄົນໆນັ້ນໃຫ້ກວ້າງຂຶ້ນ

GCI

ຂ. ເປົ້າໝາຍ: **ເປົ້າໝາຍ**ຄືອັນໃດຄືສິ່ງທີ່ຕ້ອງການທີ່ຈະເຮັດໃຫ້ສຳເລັດ

ເມື່ອທ່ານມີນິມິດແລ້ວ ຂັ້ນຕໍ່ໄປກໍຄືການຕັ້ງເປົ້າໝາຍ – ການຕັ້ງຈຸດໝາຍປາຍທາງວ່າຈະສຳເລັດຜົນ ເມື່ອໃດ ສິ່ງໃດກັນທີ່ພະເຈົ້າຕ້ອງການໃຫ້ທ່ານເຮັດ ເຮົາຕ້ອງວາງສິ່ງນັ້ນໄວ້ເທິງສິ່ງທີ່ເຮົາເຊື່ອວ່າ ພະເຈົ້າສາມາດເຮັດໄດ້ ບໍ່ແມ່ນຕາມຄວາມສາມາດຂອງເຮົາ

1. ເປົ້າໝາຍນັ້ນຈຳເປັນທີ່ຈະຕ້ອງສະເພາະເຈາະຈົງ ບໍ່ກວ້າງຈົນເກີນໄປ

ຕົວຢ່າງ: ໃຫ້ຊາວອາຂ່າທຸກຄົນໄດ້ຮັບການປະກາດພະກິດຕິຄຸນ ອັນນີ້ກວ້າງເກີນໄປ
ແຕ່ຖ້າປະກາດຫ້າໝູ່ບ້ານ ແລະສາມາດບອກຊື່ໝູ່ບ້ານເພື່ອໄດ້ຮັບຄວາມພົ້ນນີ້ເປັນການສະເພາະເຈາະຈົງ

ຕົວຢ່າງ: ສ້າງສາວົກ ກວ້າງເກີນໄປ
ສ້າງສາວົກໃຫ້ໄດ້ 10 ໃນນຶ່ງປີ

2. ຂໍ້ຜິດພາດສອງປະການໃນການຕັ້ງເປົ້າໝາຍ:

ກ) ຕັ້ງເປົ້າໝາຍຕ່ຳເກີນໄປ ບໍ່ມີການທ້າທາຍ ເປົ້າໝາຍຈຳເປັນທີ່ຈະຕ້ອງໃຫຍ່ພຽງພໍ ໃຊ້ຄວາມເຊື່ອ ແລະຄວາມສາມາດໃຊ້ສັກກະຍະພາບຂອງເຮົາອອກມາ.

ຂ) ພະຍາຍາມໄປເຖິງເປົ້າໝາຍ**ໄວເກີນໄປ** – ເຮັດໃຫ້ເກີດຄວາມໝົດກຳລັງໃຈ ທໍ້ຖອຍ ແລະການເມື່ອຍອ່ອນງ່າຍ ເກີນໄປ.

**ເປົ້າໝາຍ**ຂອງເຮົາຈະຕ້ອງຊັດເຈນກ່ອນທີ່ເຮົາຈະໄປເຖິງຂັ້ນຕອນທີ່ສາມ.

ຄ. ຍຸດທະວິທີ: ທີ່ທ່ານຈະໄປເຖິງເປົ້າໝາຍໄດ້ຢ່າງໃດ

ຂັ້ນຕອນທີ່ຈະນຳທ່ານຈາກທີ່ທ່ານຢູ່ປະຈຸບັນໄປເຖິງບ່ອນທີ່ທ່ານຕ້ອງການຈະໄປຄື

ກ) ການຄົ້ນຄວ້າວິໃຈ: ເນເຫມີ 2:11-15
ທ່ານບໍ່ຈຳເປັນທີ່ຈະຕ້ອງຮີບເລັ່ງ ໃຊ້ເວລາສຳຫລັບການຄົ້ນຄວ້າ

1) ທ່ານຈະມີຄຣິສຕະຈັກບ່ອນໃດ

2) ພື້ນທີ່ເປົ້າໝາຍລຳດັບຕໍ່ໄປຂອງທ່ານຄືອັນໃດ

3) ມີຄົນຈັກຄົນໃນໝູ່ບ້ານນັ້ນ

4) ພວກເຂົາຕ້ອງການອັນໃດ

5) ເຮົາຈະພາພວກເຂົາໄປເຖິງຂ່າວປະເສີດໄດ້ຢ່າງໃດ

6) ມີຄຣິສຕຽນຢູ່ບ່ອນນັ້ນແດ່ຫລືບໍ່

7) ເຮົາມີຄົນທີ່ຮູ້ຈັກໃນບ່ອນນັ້ນຫລືບໍ່

GCI

ຂ) **ການສື່ສານ** –ເລີ່ມທີ່ຈະສື່ສານແຜນງານຂອງທ່ານກັບຜູ້ອື່ນ - ເນເຫມີ 2:17-18 ການຕອບສະໜອງຂອງຜູ້ຄົນໃນເວລານັ້ນ "ໃຫ້ເຮົາເລີ່ມຕົ້ນສ້າງກຳແພງເມືອງກັນເຖີດ" ເນເຫມີ ບໍ່ສາມາດເຮັດດ້ວຍຕົນເອງ ເຂົາຈຳເປັນທີ່ຈະຕ້ອງຮັບການຊ່ວຍເຫລືອຈາກກອງທະຫານທີ່ຫຸ້ມເທ.

ຄ) **ຂຽນ**ຄວາມຄິດຕ່າງໆທີ່ເປັນຍຸດທະວິທີລົງໄປ

ງ) ເລີ້ມຕົ້ນວາງແຜນຂັ້ນຕອນທີ່ຈະເຮັດ:

1) ຄົ້ນຄວ້າ
2) ແບ່ງປັນນິມິດກັບຜູ້ນຳ
3) ຝຶກຝົນອົບຮົມຜູ້ນຳ 5 ຄົນ ສອນເຂົາໃຫ້ເຮັດຢ່າງໃດ?
4) ແລະຈະເລີ່ມຕົ້ນເຮັດຢ່າງໃດ? ເຊັ່ນການເຮັດພັນທະກິດກ່ຽວກັບປີ
5) ການອະທິຖານສຳລັບຜູ້ທີ່ເຈັບປ່ວຍ.
6) ເລີ່ມຕົ້ນໃນການພົບປະກັນທີ່ບ້ານຫລັງນ້ອຍໆ ອາດຈະເປັນກຸ່ມ.
7) ສອນພະຄຳຂອງພະເຈົ້າ ແລະສອນວ່າຈະປະກາດຢ່າງໃດ.
8) ເມື່ອກຸ່ມນ້ອຍໆນັ້ນໃຫຍ່ຂຶ້ນ ແບ່ງແຍກອອກເປັນສອງກຸ່ມ.
9) ເມື່ອມີ 4 ກຸ່ມກໍນຳມາລວມກັນ ແລະເລີ້ມຕົ້ນການເປັນຄຣິສຕະຈັກ.
10) ເລີ້ມຝຶກຝົນຜູ້ນຳເພື່ອທີ່ຈະອອກໄປໃນໝູ່ບ້ານອື່ນ.

## ງ. ຈຸດໝາຍ: ເມື່ອໃດທີ່ກົນລະຍຸດຂອງທ່ານປະສົບຜົນສຳເລັດ

ເຮົາຈະຕ້ອງກຳນົດຈຸດໝາຍໂດຍໃຊ້ເວລາ ເມື່ອໃດຈະເລີ້ມຕົ້ນເມື່ອໃດຈະເຖິງຈຸດສິ້ນສຸດເມື່ອທ່ານໄດ້ຂຽນຈຸດໝາຍຂອງທ່ານລົງໄປແລ້ວ ແລະມີກົນລະຍຸດທີ່ຈະນຳໄປເຖິງເປົ້າໝາຍ ຈົ່ງບອກເວລາດ້ວຍວ່າ ຈະໃຊ້ເທົ່າໃດໃນການທີ່ຈະເຮັດໃຫ້ສຳເລັດໄດ້ ພະຍາຍາມທີ່ຈະໃຫ້ໃຊ້ຢູ່ໃນຕາຕະລາງເວລາເປັນປີ ເນເຫມີ 2:6 ແລະພະລາຊາຕັດກັບຂ້າພະເຈົ້າ ວ່າ" ເຈົ້າຈະໄປນານເທົ່າໃດ ເມື່ອໃດເຈົ້າຈະກັບມາ" ເນເຫມີໄດ້ຕັ້ງເວລາໄວ້ລ່ວງໜ້າ

ໃນການຕັ້ງເປົ້າໝາຍ: ກົນລະຍຸດ ແລະຈຸດໝາຍນັ້ນຈົ່ງຄຳນຶງໄວ້ສະເໝີວ່າ

| | | |
|---|---|---|
| 1. | ໃຫ້ສະເພາະເຈາະຈົງ | ສ້າງກຳແພງຂຶ້ນມາໃໝ່ |
| 2. | ໃຫ້ສາມາດວັດໄດ້ | ກຳແພງນັ້ນເປັນສິ່ງທີ່ເບິ່ງໄດ້ວ່າເຮັດໄປສຳເລັດຫລືບໍ່ ເປັນຂັ້ນຕອນ |
| 3. | ສາມາດເຮັດໄດ້ | ກຸ່ມແຕ່ລະກຸ່ມອາດຈະສ້າງແຕ່ລະສ່ວນຂອງກຳແພງ |

4. ຄວາມເປັນຈິງ ເຮັດໃຫ້ສຳເລັດໄດ້

5. ມີໄລຍະເວລາ ກຳນົດ 52 ວັນ

ຈ. **ງົບປະມານ:** ເຮົາຕ້ອງການຄົນ ອຸປະກອນ ເວລາ ຂໍ້ມູນຂ່າວສານ ແລະເງິນ **– ຫລາຍເທົ່າໃດ?**

1. ຈະຕ້ອງໃຊ້ເງິນເທົ່າໃດ? ຄ່າອາຫານ ຄ່າທີ່ຢູ່ອາໄສ ອຸປະກອນການຮຽນ ການສອນ ຄ່າເດີນທາງ ຄ່າເຄື່ອງຂຽນຕ່າງໆ.

2. ຈະໃຊ້ເວລາເທົ່າໃດ? ທີ່ຈະເຮັດໃຫ້ງານສຳເລັດ 10 ວັນສຳລັບໂປຣແກຣມ 6 ເດືອນສຳລັບການວາງແຜນ.

3. ມີຄົນເທົ່າໃດ? ທີ່ເຮົາຈຳເປັນທີ່ຈະຕ້ອງມີ ຕ້ອງໃຊ້ ຜູ້ບໍລິຫານ ຄູອາຈານ ຜູ້ນຳ.

4. ຕ້ອງການຄົນປະເພດໃດ? ສາມາດສອນໄດ້ ສາມາດໃຫ້ຄຳປຶກສາໄດ້ ສາມາດຊ່ອຍເຫລືອໄດ້.

5. ອຸປະກອນອັນໃດ? ທີ່ຕ້ອງໃຊ້ ເຄື່ອງສາຍໂອເວີເຫັດ ໂຕ໊ະ ຕັ່ງ ກະດານ ປາກາ ເຄື່ອງຮຽນ ປ້າຍຊື່ ແລະອື່ນໆ.

6. ຈະໄດ້ມາຢ່າງໃດ? ຊື້ ເຊົ່າ ຢືມ
ລອງເບິ່ງແຫລ່ງທີ່ຈະຈັດຫາສິ່ງເຫລົ່ານີ້ໄດ້:

   1) ເລີ້ມຕົ້ນກັບຕົນເອງ: ປະສົບການກ່ຽວກັບພັນທະກິດ ສຶກສາເລື່ອງລາວ GCI ລອງປຶກສາຄົນອື່ນໃນໝູ່ບ້ານດຽວກັນ.

   2) ແຫລ່ງທີ່ມາໃນສິ່ງທີ່ຕ້ອງການວ່າມີຈາກບ່ອນອື່ນຫລືບໍ່ ລອງຕິດຕໍ່ຜູ້ປະສານງານໃນທ້ອງຖິ່ນຫລື ສິດຍາພິບານ.

ແລະເລີ້ມເບິ່ງແຫລ່ງອື່ນໆທີ່ມີປັດໃຈທີ່ຕ້ອງການ.

ສ. ຂໍ້ພິຈາລະນາອື່ນໆ ໃນການວາງແຜນ

ເມື່ອທ່ານຮູ້ແລ້ວວ່າ ຈະວາງແຜນຢ່າງໃດ ມີປະເດັນອື່ນໆອີກທີ່ທ່ານຈະຕ້ອງຮູ້ ຊຶ່ງເປັນສິ່ງທີ່ຈຳເປັນ.

ເຮົາຈະ ຕ້ອງຮູ້ ວ່າແຜນງານນັ້ນບໍ່ແຫ້ງຈົນເກີນໄປ ແຕ່ຄວນຈະມີການຍືດຍຸ່ນ.

1. ໃຫ້ຖວາຍກຽດແດ່ພະເຈົ້າ
*1 ໂກຣິນໂທ 10:31 – " ເຫດສະນັ້ນເມື່ອທ່ານຈະຮັບປະທານຈະດື່ມຫລືຈະເຮັດອັນໃດກໍຕາມ ຈົ່ງເຮັດເພື່ອເປັນການຖວາຍພະກຽດແດ່ພະເຈົ້າ"*

   ການທີ່ພະເຈົ້າຈະໄດ້ຮັບກຽດສູງສຸດ ຈົ່ງແນ່ໃຈວ່າແຜນການທຸກຢ່າງນັ້ນໄດ້ຍິ່ງໃຫຍ່ກວ່າທີ່ທ່ານຈະເຮັດ ໂດຍກຳ ລັງຂອງທ່ານເອງ.

   ຍົກຕົວຢ່າງເຊັ່ນ ກີເດໂອນກັບຄົນສາມຮ້ອຍຄົນ.

GCI

2. ຈົ່ງມີຄວາມໄວຕໍ່ການຊີ້ງນຳທີ່ພະເຈົ້າປະທານໃຫ້.

   ຍົກຕົວຢ່າງເຊັ່ນໂປໂລໄດ້ຖືກໃຊ້ຈາກພະເຈົ້າໃຫ້ໄປຍັງເມືອງມາກີໂດເນັຽ ທ່ານໄດ້ພະຍາຍາມເປີດ ປະຕູນຶ່ງ ແຕ່ບໍ່ສາມາດຈະເປີດໄດ້ ພະຍາຍາມເປີດປະຕູອື່ນໆ ຈົນສາມາດທີ່ຈະເປີດປະຕູທີ່ຖືກຕ້ອງ.

3. ມີການປະເມີນຜົນ ຈົ່ງຄາດຫວັງວ່າແຜນການຕ່າງໆ ອາດຈະປ່ຽນແປງ ແຜນການບໍ່ແມ່ນບັນຍັດ 10 ປະການ ທີ່ຂຽນໄວ້ເທິງກ້ອນຫີນ ຫລືແຜ່ນສິລາຈາລຶກ ຈົ່ງມີການປ່ຽນແປງແລະເຮັດໃຫ້ເທົ່າທັນເວລາສະເໝີ GCI ປ່ຽນແປງເຊັ່ນດຽວກັນ.

4. ໃຊ້ແຜນງານ.

   ຢ່າພະຍາຍາມວາງແຜນງານເພື່ອເຫັນແກ່ສິ່ງທີ່ທ່ານຕ້ອງວາງແຜນງານ ເພື່ອທີ່ຈະຮຽນຜ່ານຄອດGCI ໄປໄດ້ ແລະເອົາແຜນງານຂອງທ່ານວາງໄວ້ເທິງຊັ້ນໜັງສື ແລະຝຸ່ນກໍເກາະ.

5. **ສື່ສານ**ກັບຜູ້ອື່ນໃນແຜນງານຂອງທ່ານ ນຳເອົານິມິດຂອງທ່ານໄປໃຫ້ຄົນອື່ນຮູ້ນຳ ເພື່ອທີ່ເຂົາອາດຈະມີສ່ວນຮ່ວມໄດ້ເນເຫມີຢັ້ນໄດ້ເປັນກຳລັງໃຈ ແລະກະຕຸ້ນໃຫ້ຜູ້ອື່ນເຮັດວຽກໃນນິມິດຂອງທ່ານ ແລະພວກເຂົາກໍເຂົ້າມາ ມີສ່ວນຮ່ວມໃນນິມິດຂອງທ່ານ.

6. ຈຳໄວ້ສະເໝີວ່າແຜນງານຂອງທ່ານເຮັດເພື່ອຂະຫຍາຍແຜ່ນດິນຂອງພະເຈົ້າບໍ່ແມ່ນຕົວທ່ານເອງ ເອເຟໂຊ 4:11-16

7. ຈົ່ງຄິດເຖິງແຜນງານຂອງທ່ານວ່າອາດຈະມີການຕໍ່ຕ້ານ ຂະນະທີ່ເນເຫມີໄດ້ແບ່ງປັນນິມິດຂອງທ່ານກໍມີການຕໍ່ຕ້ານທັນທີ

   2:19 ມີການຫົວເຍາະເຍີ້ຍ ມີການຕະຫລົກເຮຮາ.
   4:8 ມີການວາງແຜນການທີ່ຈະຕ້ອງເຮັດໃຫ້ເກີດບັນຫາທີ່ຈະເຮັດວຽກບໍ່ສຳເລັດ.

   ເຖິງແມ່ນວ່າມີການຕໍ່ຕ້ານ ແຕ່ເນເຫມີກໍມີແຜນງານ ມີການວາງແຜນທີ່ຈະຕັ້ງຍາມທີ່ຈະຮັກສາຄວາມປອດໄພທັງກາງເວັນ ແລະກາງຄືນ ຂໍ້ 14 ວາງແຜນທີ່ຈະໃຫ້ກຳລັງໃຈຄົນເຫລົ່ານັ້ນ.

<u>**ໜັງສືອ້າງອີງ**</u>

1. Peter Brierly, Planning Priorities and Paperwork
2. _____________Vision Building